ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງໂຍທາທິການ ແລະ ຂົນສົ່ງ.

ຫ້ອງການ

14348

ເລກທີ............/ຍທຂ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 13 AUG 2014

## ແຈ້ງການ

ເຖິງ: ບັນດາກົມ, ກອງ, ຫ້ອງການດັດສົມນ້ຳປະປາ, ສະຖາບັນ, ສູນຝຶກ, ສະພາວິທະຍາສາດ ແລະເຕັກໂນໂລຊີ ແລະບັນດາລັດວິສາຫະກິດ ທີ່ຂຶ້ນກັບ ກະຊວງ ຍທຂ.

ເລື່ອງ: ການປັບປຸງບາງອັນໃນລະບຽບ ເຂົ້າ - ອອກ ກະຊວງ ໃນໂມງເລີກການ ແລະ ວັນພັກລັດຖະການ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການເຂົ້າ-ອອກສຳນັກງານ ກະຊວງສະບັບເລກທີ 14174 /ຍທຂ.ຫກ, ລົງວັນທີ່ 27 /08 /2012
- ອີງຕາມ ການເຫັນດີເປັນເອກະພາບ ກອງປະຊຸມ ຂອງຄະນະປ້ອງກັນ ກະຊວງ ຍທຂ, ຄັ້ງວັນທີ 16/7/2014
- ອີງຕາມ ການເຫັນດີຂອງ ລັດຖະມົນວ່າການ ຄັ້ງວັນທີ 11/8/2014;

ຫ້ອງການ ຂໍຖືເປັນກຽດແຈ້ງມາມາຍັງ ບັນດາກົມ, ກອງ, ຫ້ອງການດັດສົມນ້ຳປະປາ, ສະຖາບັນ, ສູນຝຶກ, ສະພາວິທະຍາສາດ ແລະເຕັກໂນໂລຊີ ແລະ ບັນດາລັດວິສາຫະກິດ ທີ່ຂຶ້ນກັບກະຊວງ ຍທຂ ຊາບວ່າ :ເພື່ອຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະຄວາມເປັນລະບຽບຮຽບຮ້ອຍໃນສຳນັກງານກະຊວງ ກ່ຽວກັບການເຂົ້າ - ອອກ ໃນໂມງເລີກການ ແລະ ວັນຢຸດລັດຖະການໃຫ້ມີຄວາມຄ່ອງຕົວ ແລະ ປະສິດທິຜົນດີກວ່າເກົ່າ, ຫ້ອງການຈຶ່ງຂໍແຈ້ງມາຍັງບັນດາທ່ານປະຕິບັດດັ່ງນີ້ :

1. ໃນມື້ລັດຖະການຈະປິດປະຕູເຂົ້າ ກະຊວງເບື້ອງປະຕູໄຊ ໃນເວລາ 17:30 ໂມງ ແລະ ຈະອະນຸຍາດໃຫ້ ເຂົ້າ-ອອກ ປະຕູເບື້ອງ ເສັ້ນທາງໂພນໄຊ ແທນປະຕູດຽວເທົ່ານັ້ນ;
2. ສະເພາະວັນພັກລັດຖະການ ( ວັນເສົາ- ວັນອາທິດ ແລະວັນພັກລັດຖະການ ຕ່າງໆ ) ແມ່ນໃຫ້ ເຂົ້າ- ອອກ ປະຕູເບື້ອງ ເສັ້ນທາງໂພນໄຊ ປະຕູດຽວ.
3. ໃຫ້ເລີ້ມຈັດຕັ້ງປະຕິບັດລະບຽບ ເຂົ້າ-ອອກ ກະຊວງທີ່ປັບປຸງໃຫມ່ດັ່ງກ່າວນີ້ນັບແຕ່ ວັນທີ່ 01 ກັນຍາ 2014 ເປັນຕົ້ນໄປ ຈົນກວ່າຈະມີການປ່ຽນແປງໃຫມ່.
   > ສ່ວນລະບຽບການອື່ນໆ ແມ່ນຍັງປະຕິບັດຕາມລະບຽບ ເຂົ້າ-ອອກ ສຳນັກງານກະຊວງ ຄືເກົ່າ ( ສະບັບ ເລກທີ 14174 ຍທຂ.ຫກ,ລົງວັນທີ 27 / 08 / 2012.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງ ທຸກພາກສ່ວນເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ຫ້ອງການ

ດຣ ສັນຕິສຸກ ສິມມາລາວົງ